ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 16 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 6. 4. 2015

# ຄຳສັ່ງ

## ວ່າດ້ວຍການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ 6 ເດືອນຕົ້ນສົກປີ, ຄາດຄະເນການຈັດຕັ້ງປະຕິບັດ ໝົດສົກປີ 2014-2015 ແລະ ກະກຽມສ້າງແຜນການ ສົກປີ 2015-2016

ເຖິງ: ບັນດາທ່ານລັດຖະມົນຕີວ່າການ, ທ່ານຫົວໜ້າອົງການຂັ້ນສູນກາງ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ໃນທົ່ວປະເທດ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 06/ສພຊ, ລົງວັນທີ 25 ກໍລະກົດ 2014.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 328/ລບ, ລົງວັນທີ 17 ກັນຍາ 2014 ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2014-2015.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ສະບັບເລກທີ 24/ນຍ, ລົງວັນທີ 7 ພຶດສະພາ 2014 ວ່າດ້ວຍການຄົ້ນຄວ້າວິໄສທັດຮອດປີ 2030, ຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).
- ອີງຕາມໜັງສືສະເໜີ ສະບັບເລກທີ 0723/ຜທ.ກຜ1, ລົງວັນທີ 27 ມີນາ 2015 ຂອງລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ.

ເພື່ອເຮັດໃຫ້ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 6 ເດືອນຕົ້ນສົກປີ, ຄາດຄະເນການຈັດຕັ້ງປະຕິບັດ ໝົດສົກປີ 2014-2015 ເຊິ່ງເປັນສົກປີສຸດທ້າຍຂອງການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ VII (2011-2015) ແລະ ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2015-2016 ເຊິ່ງເປັນສົກປີທຳອິດຂອງການຜັນຂະຫຍາຍແຜນການ 5 ປີ ຄັ້ງທີ VIII (2016-2020) ໃຫ້ທັນຕາມກຳນົດເວລາ ແລະ ທັງຮັບປະກັນເນື້ອໃນໃຫ້ມີຄວາມແທດເໝາະກັບສະພາບຕົວຈິງ.

ນາຍົກລັດຖະມົນຕີ ອອກຄຳສັ່ງ ດັ່ງນີ້:

I. **ກ່ຽວກັບການສະຫຼຸບຕີລາຄາການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນສົກປີ 2014-2015**

1. ການສະຫຼຸບແຜນພັດທະນາເສດຖະກິດ-ສັງຄົມ

ໃຫ້ຂະແໜງການ ແລະ ທ້ອງຖິ່ນ ຖືເອົາທິດທາງ, ໜ້າທີ່, ຄາດໝາຍສູ້ຊົນ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສົກປີ 2014-2015 ຕາມມະຕິຂອງສະພາແຫ່ງຊາດສະບັບເລກທີ 06/ສພຊ ລົງວັນທີ 25 ກໍລະກົດ 2014 ມາເປັນບ່ອນອີງເພື່ອສົມທຽບໃສ່ການຈັດຕັ້ງປະຕິບັດຕົວຈິງ ແລະ ເປັນບ່ອນອີງໃຫ້ແກ່ການຕີລາຄາຜົນສຳເລັດທີ່ພົ້ນເດັ່ນ ທີ່ຕ້ອງໄດ້ສືບຕໍ່ຜັນຂະຫຍາຍ, ຂໍ້ຄົງຄ້າງທີ່ຕ້ອງໄດ້ຮັບການແກ້ໄຂ, ພ້ອມທັງບົດຮຽນ ແລະ ວິທີ

ການປັບປຸງແກ້ໄຂໃນຕໍ່ໜ້າ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດບັນດາໜ້າທີ່ຮັບຜິດຊອບທີ່ລັດຖະບານມອບໝາຍໃຫ້ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ຕາມດຳລັດ 328/ລບ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ປະຈຳສົກປີ 2014-2015, ໃຫ້ຕີລາຄາເບິ່ງວ່າອັນໃດເຮັດໄດ້ ແລະ ອັນໃດເຮັດບໍ່ໄດ້ ພ້ອມກັນນັ້ນກໍຕ້ອງໄດ້ກວດກາເບິ່ງການປະຕິບັດບັນດາມາດຕະການຕ່າງໆທີ່ລັດຖະບານປະກາດນຳໃຊ້ ເພື່ອຮັບປະກັນຄວາມໝັ້ນທ່ຽງຂອງເສດຖະກິດມະຫາພາກ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ອື່ນໆ, ໃນນີ້ ຕ້ອງໄດ້ອະທິບາຍຊີ້ແຈງລະອຽດການປະຕິບັດບັນດາຕົວເລກຄາດໝາຍທີ່ຕົນເອງຮັບຜິດຊອບ ຍ້ອນສາເຫດອັນໃດທີ່ພາໃຫ້ສຳເລັດ ແລະ ພາໃຫ້ມີຂໍ້ຄົງຄ້າງ.

## 2. ການສະຫຼຸບແຜນການລົງທຶນ

ໃຫ້ສະຫຼຸບການຈັດຕັ້ງປະຕິບັດການລົງທຶນໄປຕາມ 4 ແຫຼ່ງທຶນຕົ້ນຕໍຄື: ທຶນຈາກງົບປະມານລັດ (ທຶນພາຍໃນ), ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ), ການລົງທຶນຈາກພາກສ່ວນເອກະຊົນພາຍໃນ ແລະ ຕ່າງປະເທດ ແລະ ສິນເຊື່ອທະນາຄານ. ນອກນີ້, ຖ້າຂະແໜງການໃດ, ທ້ອງຖິ່ນໃດ ມີແຫຼ່ງທຶນອື່ນໆເຊັ່ນ: ການລົງທຶນດ້ວຍເງິນເກີນແຜນ, ການລົງທຶນດ້ວຍການຫັນຊັບສິນເປັນທຶນ, ການລົງທຶນດ້ວຍພັນທະຕໍ່ງົບປະມານຂອງທຸລະກິດ ແລະ ອື່ນໆ ກໍຂໍໃຫ້ລາຍງານເພີ່ມເຕີມ ເພື່ອໃຫ້ກະຊວງແຜນການ ແລະ ການລົງທຶນ ສາມາດສັງລວມ ແລະ ລາຍງານຕໍ່ລັດຖະບານ.

### 2.1 ການລົງທຶນຂອງລັດ (ທຶນພາຍໃນ)

- ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ໄດ້ຮັບງົບປະມານຂອງລັດ ເອົາໃຈໃສ່ຕີລາຄາສະພາບການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໃນໄລຍະ 6 ເດືອນຜ່ານມາ; ໃນນັ້ນ, ຕ້ອງຊີ້ໃຫ້ເຫັນເຖິງຜົນສຳເລັດໃນການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ, ຄວາມຄືບໜ້າຂອງໂຄງການ, ການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຈຳນວນໂຄງການທີ່ໄດ້ຈັດຕັ້ງປະຕິບັດສຳເລັດ 100% ມີເທົ່າໃດ?, ໂຄງການພວມຈັດຕັ້ງປະຕິບັດມີຈັກໂຄງການ, ໂຄງການຫັນຊັບສິນເປັນທຶນ, ໂຄງການລົງທຶນກ່ອນຈະຊຳລະດ້ວຍພັນທະຕໍ່ງົບປະມານຂອງລັດຖະບານ ແລະ ບັນດາໂຄງການໜີ້ສິນ ໂດຍໃຫ້ລະບຸລະອຽດວ່າມີຈັກໂຄງການ, ມູນຄ່າເທົ່າໃດ? ໄດ້ມີການຊຳລະໃຫ້ແຕ່ລະໂຄງການແລ້ວເທົ່າໃດ ໂດຍສະເພາະແມ່ນການຊຳລະແບບມີສ່ວນຫຼຸດດ້ວຍພັນທະບັດ, ຈາກແຫຼ່ງທຶນອື່ນເປັນຕົ້ນ: ຈາກເງິນເກີນແຜນ, ຈາກການອ່າຍໜີ້ 3 ແຈ, ການຊຳລະດ້ວຍພັນທະບັດ, ແບບມີສ່ວນຫຼຸດ ຫຼື ອື່ນໆ. ໃຫ້ຕີລາຄາສະພາບການຊຳລະໂຄງການ ແລະ ການຊຳລະໜີ້ສິນເປັນແນວໃດ?, ມີປະສິດທິຜົນ ແລະ ສາມາດແກ້ໄຂບັນຫາກົດໜ່ວງຈາກສະພາບໜີ້ສິນໄດ້ ຫຼື ບໍ່?.
- ໃຫ້ສັງລວມໂຄງການນອກການຮັບຮອງຂອງສະພາແຫ່ງຊາດ (ໂຄງການນອກແຜນ) ທີ່ໄດ້ລົງມືຈັດຕັ້ງປະຕິບັດນັບແຕ່ວັນທີ 1 ມັງກອນ 2012 ເປັນຕົ້ນມາ, ໂຄງການລົງທຶນກ່ອນ ແລະ ໂຄງການດ້ວຍການຫັນຊັບສິນເປັນທຶນທີ່ລັດຖະບານ, ຂະແໜງການ ຫຼື ອົງການປົກຄອງທ້ອງຖິ່ນ ໄດ້ຕົກລົງໃຫ້ຈັດຕັ້ງປະຕິບັດແລ້ວ ແລະ ມາຮອດປະຈຸບັນການຊຳລະບໍ່ທັນສຳເລັດ.
- ໃຫ້ລາຍງານສະພາບການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດຮອດປະຈຸບັນຫຼຸດລົງບໍ່? ການຈັດຕັ້ງປະຕິບັດຂໍ້ຕົກລົງເລກທີ 61/ນຍ ວ່າດ້ວຍມາດຕະການສະກັດກັ້ນ ແລະ ແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ມີຄວາມຄືບໜ້າຊ່ຳໃດ? ນິຕິກຳດັ່ງກ່າວສະກັດກັ້ນ ແລະ ແກ້ໄຂໜີ້ສິນໄດ້ບໍ່? ນອກນີ້, ການຈັດຕັ້ງປະຕິບັດຄຳສັ່ງເລກທີ 16/ນຍ ກ່ຽວກັບບັນຫາການລົງທຶນກ່ອນ ມີຄວາມຄືບໜ້າບໍ່? ແລະ ການກວດກາໂຄງການໃຫຍ່ສາມາດສະຫຼຸບໄດ້ແນວໃດແລ້ວ?.

### 2.2 ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ)

ໃຫ້ບັນດາກະຊວງ, ອົງການ, ນະຄອນຫຼວງ ແລະ ບັນດາແຂວງ ທີ່ໄດ້ຮັບທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ຕ້ອງໄດ້ສັງບົດສະຫຼຸບໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອສັງລວມລາຍງານລັດຖະບານ ຄືດັ່ງນີ້: ໂຄງການທີ່ພວມຈັດຕັ້ງປະຕິບັດມີຈັກໂຄງການ? ໂຄງການຊ່ວຍເຫຼືອລ້າ (ລວມທັງໂຄງການຊ່ວຍເຫຼືອດ້ານເຕັກນິກ ຫຼື TA) ມີ

ຈັກໂຄງການ, ມູນຄ່າເທົ່າໃດ? ໂຄງການກູ້ຢືມມີຈັກໂຄງການ, ມູນຄ່າເທົ່າໃດ? ມີທຶນສົມທົບພາຍໃນເທົ່າໃດ? ຄຽງຄູ່ກັນນັ້ນ ໃຫ້ສະຫຼຸບສັງລວມບັນດາແຜນງານ/ໂຄງການ ຊກພ ໃໝ່ທີ່ໄດ້ເຊັນກັບຜູ້ໃຫ້ທຶນໃນ 6 ເດືອນຕົ້ນສົກປີ ມີຈັກໂຄງການ, ມູນຄ່າເທົ່າໃດ? ໃນນີ້ໃຫ້ແຍກໂຄງການຊ່ວຍເຫຼືອລ້າ ລວມທັງໂຄງການຊ່ວຍເຫຼືອດ້ານເຕັກນິກ ຫຼື TA) ມີຈັກໂຄງການ, ມູນຄ່າເທົ່າໃດ? ກູ້ຢືມຈັກໂຄງການ, ມູນຄ່າເທົ່າໃດ? ມີທຶນສົມທົບພາຍໃນເທົ່າໃດ? ພ້ອມກັນນັ້ນກໍໃຫ້ຄາດຄະເນການປະຕິບັດໝົດສົກປີ 2014-2015 ຈະສາມາດເຊັນສັນຍາຮັບໂຄງການ ຊກພ ເທົ່າໃດໂຄງການ, ມູນຄ່າເທົ່າໃດ? ໝົດສົກປີ 2014-2015 ຈະສາມາດປະຕິບັດໄດ້ທັງໝົດຈັກໂຄງການ, ມູນຄ່າເທົ່າໃດ?.

2.3 ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ

ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ລາຍງານຈຳນວນໂຄງການທີ່ໄດ້ອະນຸມັດໃໝ່ ໃນ 6 ເດືອນຕົ້ນສົກປີ ມີຈັກໂຄງການ, ມີມູນຄ່າທຶນຈົດທະບຽນເທົ່າໃດ ແລະ ທຶນນຳເຂົ້າຕົວຈິງມີເທົ່າໃດ (ລວມທັງໂຄງການເກົ່າ ແລະ ໂຄງການທີ່ອະນຸມັດໃນສົກປີ 2014-2015); ຈຳນວນໂຄງການທີ່ໄດ້ຈັດຕັ້ງປະຕິບັດໃນ 6 ເດືອນຕົ້ນສົກປີມີຈັກໂຄງການ, ມີມູນຄ່າເທົ່າໃດ, ໂດຍແຍກໃຫ້ເຫັນໂຄງການສຳປະທານ, ໂຄງການທົ່ວໄປ ແລະ ໂຄງການທີ່ປະຕິບັດໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ; ໂຄງການທີ່ອະນຸມັດແລ້ວແຕ່ບໍ່ໄດ້ຈັດຕັ້ງປະຕິບັດມີຈັກໂຄງການ, ມູນຄ່າເທົ່າໃດ, ດ້ວຍເຫດຫຍັງ; ໃຫ້ຕີລາຄາເບິ່ງສະພາບການອຳນວຍຄວາມສະດວກໃຫ້ແກ່ຜູ້ມາລົງທຶນ ສາມາດສ້າງຄວາມດຶງດູດໃຫ້ນັກລົງທຶນໄດ້ດີຂຶ້ນ ຫຼື ບໍ່, ການບໍລິການປະຕູດຽວຢູ່ຂັ້ນທ້ອງຖິ່ນມີຄືແນວໃດ, ລະບົບກົນໄກການປະສານງານລະຫວ່າງຂະແໜງການ ແລະ ທ້ອງຖິ່ນ ເປັນແນວໃດ; ໃຫ້ສະຫຼຸບຕີລາຄາສະພາບການປະຕິບັດຄຳສັ່ງເລກທີ 13/ນຍ ໄດ້ດຳເນີນການຄືແນວໃດ, ມີດ້ານດີ, ດ້ານອ່ອນຄືແນວໃດ ແລະ ທິດທາງໃນຕໍ່ໜ້າຈະສືບຕໍ່ແນວໃດ?.

2.4 ການປ່ອຍສິນເຊື່ອຂອງທະນາຄານ

ໃຫ້ສະຫຼຸບການປ່ອຍສິນເຊື່ອ ໃນໄລຍະ 6 ເດືອນຕົ້ນສົກປີ, ຄາດຄະເນໝົດສົກປີ 2014-2015 ມີມູນຄ່າເທົ່າໃດ, ທຽບໃສ່ປີຜ່ານມາເປັນແນວໃດ; ໄດ້ປ່ອຍໃຫ້ບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງ ເທົ່າໃດ? ໃຫ້ຕີລາຄາການປ່ອຍສິນເຊື່ອ ຖືກຕາມທິດທາງ ແລະ ໄປຕາມເປົ້າໝາຍຂອງແຜນການໄດ້ກຳນົດໄວ້ບໍ່; ພ້ອມນີ້ ກໍໃຫ້ສະຫຼຸບຕີລາຄາດ້ານດີ, ດ້ານອ່ອນ ແລະ ສາເຫດ. ມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນຜູ້ສັງລວມແລ້ວລາຍງານຕໍ່ໃຫ້ລັດຖະບານ ແລະ ກະຊວງແຜນການ ແລະ ການລົງທຶນ ເພື່ອສັງລວມບັນຫາດັ່ງກ່າວ.

2.5 ທຶນວິສາຫະກິດ ແລະ ວິສາຫະກິດປະສົມ

ໃຫ້ພາກສ່ວນທີ່ກ່ຽວຂ້ອງສະຫຼຸບການລົງທຶນຂອງລັດວິສາຫະກິດ ແລະ ວິສາຫະກິດປະສົມ ທີ່ຂະແໜງການຕົນຮັບຜິດຊອບຄຸ້ມຄອງ ໂດຍໃຫ້ລາຍງານລະອຽດຈຳນວນຫົວໜ່ວຍ, ທຶນຄົງທີ່ ແລະ ທຶນໝູນວຽນ ວ່າມີຈຳນວນເທົ່າໃດ? ສຳລັບວິສາຫະກິດປະສົມ ໃຫ້ໄຈ້ແຍກລະອຽດວ່າເປັນຮຸ້ນຂອງລັດໃນວິສາຫະກິດດັ່ງກ່າວ ຈັກສ່ວນຮ້ອຍ ແລະ ແຍກສະເພາະສ່ວນທີ່ລັດລົງທຶນ, ໃຫ້ລາຍງານສະພາບການຄຸ້ມຄອງ, ການດຳເນີນທຸລະກິດ, ຜົນຜະລິດ ແລະ ບໍລິການອອກສູ່ສັງຄົມ. ມອບໃຫ້ຄະນະປັບປຸງທຸລະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ ປະສານສົມທົບກັນ ແລ້ວສັງລວມທົ່ວປະເທດລາຍງານຕໍ່ລັດຖະບານ ແລະ ກະຊວງແຜນການ ແລະ ການລົງທຶນ ເພື່ອສັງລວມເຂົ້າບົດແຜນພັດທະນາເສດຖະກິດ-ສັງຄົມ.

II. **<u>ການຄາດຄະເນປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນ ທ້າຍສົກປີ 2014-2015:</u>**

ແຜນການສົກປີ 2014-2015 ແມ່ນໄລຍະສຸດທ້າຍຂອງການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ VII (2011-2015) ສະນັ້ນ ຈຶ່ງມີຄວາມໝາຍສຳຄັນຫຼາຍ, ບັນດາກະຊວງ-ອົງການ ແລະ ແຂວງ ຕ້ອງໄດ້ເອົາໃຈໃສ່ຕີລາຄາສະພາບພາວະວິໄສ ໃຫ້ຖືກຕ້ອງກັບຄວາມເປັນຈິງ, ສົມທຽບກັບບັນດາຄາດໝາຍຂອງຂະແໜງການ ແລະ ທ້ອງຖິ່ນ ຂອງຕົນວາງໄວ້

ຕາມແຜນ 2014-2015 ແລະ ໃຫ້ຕີລາຄາສົມທຽບກັບແຜນ 5 ປີ ຄັ້ງທີ VII ຂອງຂະແໜງການຕົນວາງໄວ້, ພ້ອມນີ້ຕ້ອງມີມາດຕະການ ເພື່ອໃຫ້ບັນລຸໃນ 6 ເດືອນ ທ້າຍສົກປີ ດັ່ງລາຍລະອຽດຕໍ່ໄປນີ້:

1. ຂະແໜງການ ແລະ ທ້ອງຖິ່ນ ຄາດຄະເນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໝົດສົກປີ 2014-2015 ໂດຍຖືເອົາບັນດາທິດທາງໜ້າທີ່, ຄາດໝາຍສູ້ຊົນ, ຜົນສຳເລັດ ແລະ ຂໍ້ຄົງຄ້າງຂອງການຈັດຕັ້ງປະຕິບັດບັນດາຕົວເລກຄາດໝາຍທີ່ຂະແໜງການ ແລະ ທ້ອງຖິ່ນຕົນວາງໄວ້ ໃນໄລຍະ 6 ເດືອນຜ່ານມາເປັນບ່ອນອີງ; ພ້ອມກັນນັ້ນກໍໃຫ້ກວດກາເບິ່ງຄວາມອາດສາມາດ ແລະ ເງື່ອນໄຂຕົວຈິງໃນການຈັດຕັ້ງປະຕິບັດ, ປັດໄຈ, ທ່າແຮງຕ່າງໆ ທັງພາຍໃນ ແລະ ສາກົນ ທີ່ອາດກະທົບໃນການຈັດຕັ້ງປະຕິບັດແຜນການໃນ 6 ເດືອນຕໍ່ໜ້າ.
2. ຂະແໜງການ ແລະ ທ້ອງຖິ່ນ ກຳນົດວຽກຈຸດສຸມທີ່ປະຕິບັດໃນຕໍ່ໜ້າລວມທັງວິທີການ ແລະ ມາດຕະການໃນການຜັນຂະຫຍາຍຜົນສຳເລັດທີ່ໄດ້ຮັບໃນໄລຍະຜ່ານມາໃຫ້ສືບຕໍ່ໄດ້ຮັບຜົນຍິ່ງຂຶ້ນ ແລະ ເພື່ອແກ້ໄຂບັນຫາຄົງຄ້າງຕ່າງໆໃຫ້ຕົກໄປ ໂດຍສະເພາະແມ່ນບັນດາວຽກງານທີ່ໄດ້ສະແດງຜ່ານຕົວຊີ້ວັດທີ່ເຫັນວ່າຈະບໍ່ສາມາດບັນລຸໄດ້ຕາມແຜນການ.
3. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ມີຜົນສຳເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້, ຖ້າຂະແໜງການໃດ, ທ້ອງຖິ່ນໃດ ເຫັນວ່າຍັງມີຄວາມຈຳເປັນຕ້ອງໄດ້ປະສານງານ, ປຶກສາຫາລື ແລະ ຕ້ອງຮັບການຊ່ວຍເຫຼືອຈາກລັດຖະບານ ກໍໃຫ້ຄົ້ນຄວ້ານຳສະເໜີ ເພື່ອຂໍທິດຊີ້ນຳຈາກຂັ້ນເທິງ.
4. ເພື່ອຮັບປະກັນໃຫ້ການປະຕິບັດວຽກຈຸດສຸມໃນໄລຍະ 6 ເດືອນທ້າຍສົກປີ ບັນລຸຜົນ ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ກຳນົດມາດຕະການຈັດຕັ້ງປະຕິບັດ ສຳລັບ 6 ເດືອນທ້າຍສົກປີ 2014-2015 ຕົ້ນຕໍແມ່ນອີງໃສ່ມາດຕະການທີ່ກຳນົດໄວ້ໃນແຜນການປີ; ນອກຈາກນັ້ນ ໃຫ້ຂະແໜງການ ແລະ ທ້ອງຖິ່ນ ຄົ້ນຄວ້າຕື່ມບັນຫາທີ່ເຫັນວ່າມີຄວາມຈຳເປັນ ເພື່ອສະເໜີລັດຖະບານພິຈາລະນາເປັນມາດຕະການໃນການຈັດຕັ້ງປະຕິບັດບັນດາຄາດໝາຍຕ່າງໆໃຫ້ບັນລຸ.

## III. <u>ກ່ຽວກັບການສ້າງແຜນ ສົກປີ 2015-2016:</u>

ສົກປີ 2015-2016 ແມ່ນເປັນສົກປີທຳອິດຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) ສະນັ້ນ, ຈຶ່ງມີຄວາມຮຽກຮ້ອງໃຫ້ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນຕ່າງໆມີຄວາມເປັນເອກະພາບສູງຕໍ່ທັດສະນະ, ທິດທາງໜ້າທີ່, ເປົ້າໝາຍ, ຄາດໝາຍລວມ, ວຽກງານຈຸດສຸມຂອງແຜນການ 5 ປີດັ່ງກ່າວ. ດັ່ງນັ້ນ, ສະເໜີໃຫ້ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ເອົາໃຈໃສ່ດັ່ງນີ້:

### 1. <u>ຈຸດໝາຍ, ທິດທາງ, ໜ້າທີ່ລວມ, ຄາດໝາຍສູ້ຊົນ, ໝາກຜົນ ແລະ ວຽກຈຸດສຸມ ຂອງແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2015-2016</u>:

#### 1.1 ຈຸດໝາຍລວມ

ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ; ສືບຕໍ່ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໜັກແໜ້ນ ແລະ ທົ່ວເຖິງ, ສ້າງພື້ນຖານ ແລະ ເງື່ອນໄຂໃນການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາໃນປີ 2020 ໂດຍຊຸກຍູ້ການເຕີບໂຕທີ່ຕໍ່ເນື່ອງ, ສົມດຸນ ແລະ ຍືນຍົງ; ມີການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນສູງ; ສ້າງໃຫ້ໄດ້ການຫັນປ່ຽນຮູບແບບການພັດທະນາຕາມທິດເສີມຂະຫຍາຍທ່າແຮງທີ່ບົ່ມຊ້ອນ ແລະ ຂໍ້ໄດ້ປຽບຂອງປະເທດ, ເຂົ້າຮ່ວມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ.

#### 1.2 ທິດທາງ-ໜ້າທີ່ລວມ

1) ເຮັດໃຫ້ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ມີຄຸນນະພາບ, ຮັບປະກັນສະຖຽນລະພາບດ້ານເສດຖະກິດມະຫາພາກ, ດຸນດ່ຽງລະຫວ່າງການພັດທະນາ ແລະ ການສະໜອງທຶນ ໂດຍໃຫ້ສອດຄ່ອງກັບເງື່ອນໄຂໃໝ່ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

2) ຮັບປະກັນການພັດທະນາທີ່ຍືນຍົງ, ມີຄວາມສອດຄ່ອງກົມກຽວລະຫວ່າງການພັດທະນາເສດຖະກິດ, ວັດທະນະທໍາ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ ທັງເປັນເຈົ້າການຮັບມືກັບໄພພິບັດທໍາມະຊາດຢ່າງທັນການ, ຮັບປະກັນການພັດທະນາຊົນນະບົດຮອບດ້ານ ຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ ຕາມທິດ 3 ສ້າງ.

3) ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ: ສ້າງກໍາລັງແຮງງານໃຫ້ມີສີມື, ມີລະບຽບວິໄນ ແລະ ດຸໝັ່ນ, ອົດທົນ, ສ້າງໃຫ້ໄດ້ຊ່ຽວຊານສະເພາະດ້ານວິຊາການ ແລະ ເຕັກນິກ, ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານລັດ, ວິສາຫະກິດ ແລະ ຜູ້ປະກອບການໃຫ້ມີຄວາມສາມາດແຂ່ງຂັນສູງຂຶ້ນ ທັງພາຍໃນ ແລະ ຕ່າງປະເທດ.

4) ຮັກສາສະຖຽນລະພາບທາງດ້ານການເມືອງ, ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ; ສ້າງສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທໍາ ແລະ ສີວິໄລ.

5) ສືບຕໍ່ເປີດກ້ວາງການຮ່ວມມືກັບສາກົນດ້ວຍຫຼາຍຮູບແບບ ຢ່າງເປັນເຈົ້າການ ຕາມທິດຕ່າງຝ່າຍຕ່າງມີຜົນປະໂຫຍດ; ສ້າງເງື່ອນໄຂທີ່ເອື້ອອໍານວຍໃຫ້ແກ່ການເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ.

1.3 ຄາດໝາຍສູ້ຊົນ (ຕົ້ນຕໍ)

- ຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ, ລວມຍອດຜະລິດຕະພັນພາຍໃນ (GDP) ເພີ່ມຂຶ້ນບໍ່ຫຼຸດ 7,5 %, ຄາດຄະເນມູນຄ່າ GDP 115.452 ຕື້ກີບ, ອັດຕາເງິນເຟີ້ໃຫ້ຢູ່ໃນລະດັບຕໍ່າກວ່າການຂະຫຍາຍຕົວຂອງເສດຖະກິດ, ປະລິມານເງິນ ($M_2$) ໃຫ້ສອດຄ່ອງຕາມການຂະຫຍາຍຕົວຂອງເສດຖະກິດ, ຮັບປະກັນສະຖຽນລະພາບທາງດ້ານອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ສາມາດຄຸ້ມຄອງໄດ້.
- ສູ້ຊົນເກັບລາຍຮັບງົບປະມານໃຫ້ໄດ້ 23-25% ຂອງ GDP ແລະ ຂອບການຂາດດຸນບໍ່ໃຫ້ເກີນ 5% ຂອງ GDP
- ຊຸກຍູ້ການສົ່ງອອກສິນຄ້າໃຫ້ເພີ່ມຂຶ້ນ 18%, ສູ້ຊົນສ້າງຄັງສໍາຮອງເງິນຕາຕ່າງປະເທດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ກຸ້ມການນໍາເຂົ້າໃຫ້ໄດ້ຢ່າງໜ້ອຍ 5 ເດືອນ.
- ສົ່ງເສີມການພັດທະນາສີມືແຮງງານໃຫ້ເພີ່ມຂຶ້ນ; ພ້ອມນີ້ຕ້ອງໄດ້ສ້າງມາດຖານດ້ານແຮງງານ; ອອກໃບຢັ້ງຢືນສີມືແຮງງານ, ສ້າງ ແລະ ພັດທະນາຄັງສະສົມຂອງລັດເປັນເງິນ, ເປັນວັດຖຸ ແລະ ເປັນສິນຄ້າສະສົມແຫ່ງລັດໃຫ້ໄດ້ 2% ຂອງລາຍຮັບ ເພື່ອເປັນສິ່ງຄໍ້າປະກັນວຽກຈໍາເປັນ.

## 2. ແຜນການລົງທຶນສົກປີ 2015-2016:

ເພື່ອໃຫ້ເນື້ອໃນຈຸດໝາຍ, ທິດທາງ, ບັນດາຄາດໝາຍຕົ້ນຕໍ, ໝາກຜົນ ແລະ ໜ້າວຽກຈຸດສຸມຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ມີຄວາມສໍາເລັດຕາມແຜນວາງໄວ້ນັ້ນ, ປັດໄຈໜຶ່ງກໍ່ຄືແຫຼ່ງທຶນທີ່ຈະນໍາມາຈັດຕັ້ງປະຕິບັດໜ້າວຽກທີ່ວາງໄວ້ຂ້າງເທິງນີ້, ທຸກພາກສ່ວນຕ້ອງໄດ້ອອກແຮງປຸກລະດົມ, ຂົນຂວາຍ, ຊອກຄົ້ນ ແລະ ຄຸ້ມຄອງ; ຈໍາແນກຄວາມອາດສາມາດຂອງແຕ່ລະແຫຼ່ງທຶນ ໂດຍຖືກຕ້ອງຕາມລະບຽບການທີ່ມີກົດໝາຍວ່າດ້ວຍງົບປະມານ, ກົດໝາຍວ່າດ້ວຍການລົງທຶນຂອງລັດ, ລະບຽບການຂອງລັດວາງອອກຈໍານວນໜຶ່ງ.

### 2.1 ການດຸນດ່ຽງແຫຼ່ງທຶນເພື່ອການພັດທະນາ

ເພື່ອຮັບປະກັນໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ໃນສົກປີ 2015-2016 ຂະຫຍາຍຕົວບໍ່ຫຼຸດ 7,5% ມີຄວາມຕ້ອງການທຶນທັງໝົດ ປະມານ 34.450 ຕື້ກີບ ຫຼື ເທົ່າກັບ 29,8% ຂອງ GDP ໃນນັ້ນ:

- ການລົງທຶນຈາກງົບປະມານລັດ ໃຫ້ໄດ້ ລະຫວ່າງ 3.800-4.000 ຕື້ກີບ; ກວມ 11,03% - 11,61% ຂອງທຶນລວມ.
- ທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຕ່າງປະເທດ ໃຫ້ໄດ້ 5.600 ຕື້ກີບ ຫຼື ເທົ່າກັບ 700 ລ້ານໂດລາສະຫະລັດ; ກວມ 16,25% ຂອງທຶນລວມ.

- ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ລະຫວ່າງ 18.150 - 18.350 ຕື້ກີບ; ກວມ 52,68% - 53,26% ຂອງທຶນລວມ.
- ສິນເຊື່ອທະນາຄານ ໃຫ້ໄດ້ 6.700 ຕື້ກີບ; ກວມ 19,45% ຂອງທຶນລວມ.

2.2 ການລົງທຶນຂອງລັດ

ໂຄງການລົງທຶນຂອງລັດຕ້ອງສ້າງຂຶ້ນບົນພື້ນຖານທິດທາງ, ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການ ແລະ ທ້ອງຖິ່ນ ເພື່ອຮັບປະກັນການບັນລຸເປົ້າໝາຍຂອງແຜນດັ່ງກ່າວ ຕ້ອງໄດ້ຄຳນຶງເຖິງການເຊື່ອມໂຍງລະຫວ່າງແຕ່ລະເປົ້າໝາຍ, ແຜນງານ ແລະ ໂຄງການຢ່າງຈະແຈ້ງ ແລະ ສິ່ງສຳຄັນຕ້ອງດຸ່ນດ່ຽງກັບຄວາມສາມາດໃນການສະໜອງທຶນຮອນ. ເພື່ອໃຫ້ການປະຕິບັດມີຜົນສຳເລັດ ແລະ ມີປະສິດທິຜົນ ໃຫ້ເລືອກເອົາແຜນງານ ແລະ ໂຄງການຢ່າງມີຈຸດສຸມພາຍໃຕ້ກອບງົບປະມານທີ່ຈັດສັນໃຫ້ໂດຍສະເພາະໃຫ້ພິຈາລະນາສຸມທຶນໃສ່ໂຄງການສົມທົບທຶນກັບຕ່າງປະເທດ, ໂຄງການສືບຕໍ່, ໂຄງການຊຳລະໜີ້ສິນມີການເລືອກເຟັ້ນ ແລະ ອະນຸມັດໂຄງການທີ່ມີຄວາມຈຳເປັນແທ້ໆ. ໃຫ້ມີການປະສານສົມທົບກັນລະອຽດ ລະຫວ່າງຂະແໜງການແລະ ທ້ອງຖິ່ນເພື່ອບໍ່ໃຫ້ມີການຂຶ້ນແຜນຊໍ້າຊ້ອນກັນ; ຫຼີກເວັ້ນ ແລະ ຈຳກັດການຊຳລະແບບຊະຊາຍ, ຫຼາຍແຫ່ງ ແບບບໍ່ລວມສູນທີ່ຂາດຫຼັກການ.

- ການພິຈາລະນາອະນຸມັດໂຄງການລົງທຶນຂອງລັດ ປະຈຳສົກປີ 2015-2016 ຕ້ອງໄດ້ປະຕິບັດຕາມກົດໝາຍວ່າດ້ວຍການລົງທຶນຂອງລັດຢ່າງເຄັ່ງຄັດ ໂດຍສະເພາະການສະເໜີໂຄງການໃໝ່ເຂົ້າແຜນ ຕ້ອງມີເອກະສານຄົບຖ້ວນຕາມມາດຕາ 17 ແລະ ຕ້ອງໄດ້ຜ່ານການປະເມີນຜົນຕາມມາດຕາ 26 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ ຕ້ອງແມ່ນໂຄງການທີ່ຜ່ານການປະເມີນໄດ້ປະເພດ A ແລະ B ເທົ່ານັ້ນ ຈຶ່ງມີເງື່ອນໄຂເອົາເຂົ້າພິຈາລະນາ ເພື່ອບັນຈຸເຂົ້າໃນແຜນສົກປີ. ທິດລວມຂອງການຈັດສັນທຶນໃສ່ໂຄງການໃນສົກປີ 2015-2016 ຍັງແມ່ນສຸມໃສ່ໂຄງການສົມທົບທຶນກັບຕ່າງປະເທດ, ໂຄງການສືບຕໍ່ ແລະ ໂຄງການທີ່ເປັນໜີ້ສິນໃນແຜນ, ສ່ວນໂຄງການໃໝ່ຈະພິຈາລະນາແຕ່ບາງໂຄງການທີ່ຈຳເປັນເທົ່ານັ້ນ.
- ໂຄງການລົງທຶນຂອງລັດຕ້ອງແຍກເປັນ 2 ລະດັບຄື: ໂຄງການບູລິມະສິດ (ໂຄງການໃຫຍ່ລະດັບຊາດ) ແລະ ໂຄງການປົກກະຕິຂອງຂະແໜງການ ແລະ ທ້ອງຖິ່ນ.
- ໂຄງປະກອບການລົງທຶນ (ຕາມຂົງເຂດ-ຂະແໜງການ)
  - + ຂົງເຂດເສດຖະກິດ ກວມ 35%
  - + ຂົງເຂດສັງຄົມ ກວມ 35%
  - + ຂົງເຂດສຳນັກງານ-ຫ້ອງການອື່ນໆ ກວມ 30%

2.3 ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA)

ການນຳໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາແມ່ນເລັ່ງໃສ່ ການປະຕິບັດບັນດາຄາດໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ທີ່ບໍ່ບັນລຸໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ; ພ້ອມກັນນັ້ນ ກໍໃຫ້ສຸມໃສ່ພັດທະນາຂົງເຂດສັງຄົມ ເປັນຕົ້ນ: ພັດທະນາຊັບພະຍາກອນມະນຸດໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ, ການຄຸ້ມຄອງສິ່ງແວດລ້ອມ ຕາມທິດການພັດທະນາແບບຍືນຍົງ. ການສັງລວມໂຄງການ ODA ໃຫ້ສັງລວມເປັນ 2 ລະດັບຄື: (1) ໂຄງການໃຫຍ່ລະດັບຊາດ; (2) ໂຄງການປົກກະຕິຂອງຂະແໜງການ ແລະ ທ້ອງຖິ່ນ.

2.4 ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ

ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ແມ່ນໃຫ້ເລັ່ງໃສ່ດຶງດູດເອົາໂຄງການລົງທຶນທີ່ເປັນຫົວຈັກແກ່ດຶງໃຫ້ແກ່ການພັດທະນາເສດຖະກິດຂອງປະເທດ ເປັນຕົ້ນໂຄງການຂະໜາດໃຫຍ່ ເຊັ່ນ: ໂຄງການກໍ່ສ້າງເຂື່ອນໄຟຟ້າ,

ໂຮງງານໄຟຟ້າ, ໂຄງການອຸດສາຫະກຳປຸງແຕ່ງ, ອຸດສາຫະກຳເບົາ, ໂຄງການຊົນລະກະເສດ ແລະ ການພັດທະນາຕະຫຼາດທຶນ, ໂຄງການສົ່ງເສີມກະສິກຳ ແລະ ການປຸງແຕ່ງຜົນຜະລິດຕະພັນກະສິກຳ-ປ່າໄມ້, ໂຄງການຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ໂຮງງານອຸດສາຫະກຳ. ນອກຈາກນັ້ນ ກໍໃຫ້ເອົາໃຈໃສ່ດຶງດູດການລົງທຶນເຂົ້າໃນໂຄງການຂະໜາດນ້ອຍ ແລະ ກາງ, ບັນດາໂຄງການທີ່ນຳໃຊ້ເຕັກນິກວິທະຍາສາດທີ່ທັນສະໄໝ. ນອກຈາກນີ້, ກໍຕ້ອງອົາໃຈໃສ່ສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງ ແລະ ເປັນພື້ນຖານເສດຖະກິດແຫ່ງຊາດ. ການສັງລວມໂຄງການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ສັງລວມເປັນ 2 ລະດັບຄື: (1) ໂຄງການໃຫຍ່ລະດັບຊາດ, (2) ໂຄງການປົກກະຕິຂອງຂະແໜງການ ແລະ ທ້ອງຖິ່ນ.

2.5 ສິນເຊື່ອທະນາຄານ

ເປົ້າໝາຍການນຳໃຊ້ສິນເຊື່ອ ແມ່ນໃຫ້ເລັ່ງໃສ່ໂຄງການຜະລິດເປັນສິນຄ້າທີ່ມີປະສິດທິຜົນ, ໂຄງການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຊຸກຍູ້-ສົ່ງເສີມການຜະລິດ-ບໍລິການຂອງຄົວເຮືອນ, ການຜະລິດຂອງກຸ່ມການຜະລິດ, ການຜະລິດຂະໜາດນ້ອຍ ແລະ ຂະໜາດກາງ ແນໃສ່ສ້າງວຽກເຮັດງານທຳ ແລະ ເພີ່ມລາຍໄດ້ໃຫ້ປະຊາຊົນ ແລະ ແນໃສ່ການສົ່ງອອກ ເພື່ອຊຸກຍູ້ການເຕີບໂຕຂອງເສດຖະກິດແຫ່ງຊາດ. ນອກນີ້ ຕະຫຼາດຫຼັກຊັບຕ້ອງໄດ້ມີການພັດທະນາ ແລະ ສ້າງເງື່ອນໄຂສະພາບແວດລ້ອມ ເພື່ອເປັນແຫຼ່ງລະດົມທຶນຮອນໃຫ້ຫົວໜ່ວຍທຸລະກິດທີ່ມີເງື່ອນໄຂ.

IV. <u>ມາດຕະການຈັດຕັ້ງປະຕິບັດ</u>

1. ພາຍຫຼັງໄດ້ຮັບຄຳສັ່ງສະບັບນີ້ແລ້ວ, ໃຫ້ບັນດາກະຊວງ, ອົງການຂັ້ນສູນກາງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຈົ່ງຮີບຮ້ອນຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ເນື້ອໃນຈິດໃຈດັ່ງກ່າວໃຫ້ກົມກອງ, ພະແນກ ແລະ ພາກສ່ວນຕ່າງໆ ທີ່ຂຶ້ນກັບຕົນ ເພື່ອພ້ອມກັນຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ.
2. ພາຍຫຼັງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ໄດ້ສຳເລັດການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນສົກປີ 2014-2015, ຄາດຄະເນການຈັດຕັ້ງປະຕິບັດ 6 ເດືອນທ້າຍສົກປີ 2014-2015 ແລະ ສ້າງແຜນການສົກປີ 2015-2016 ຂອງຕົນແລ້ວ ຕ້ອງໄດ້ສົ່ງບົດສະຫຼຸບລາຍງານ ພ້ອມດ້ວຍຕາຕະລາງຕົວເລກຄາດໝາຍຂອງຂະແໜງຕົນໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອສັງລວມ ກ່ອນວັນທີ 10/04/2015
3. ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ອອກບົດແນະນຳລະອຽດຕື່ມ ແລະ ໃຫ້ສົມທົບກັບຫ້ອງວ່າການລັດຖະບານ ເປັນໃຈກາງປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນຕ່າງໆ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ມີຜົນສຳເລັດຕາມກຳນົດເວລາ, ຮັບປະກັນຈຸດປະສົງ ແລະ ເນື້ອໃນຄຳສັ່ງສະບັບນີ້ຢ່າງຄົບຖ້ວນ.

V. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ